ກະຊວງອຸດສາຫະກຳ ແລະ ການຄ້າ
ກົມແຜນການ ແລະ ການຮ່ວມມື
ຂາເຂົ້າ | ເລກທີ 741
ວັນທີ 7.7.16

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ກົມການຄ້າພາຍໃນ

ເລກທີ: 0568 /ຄພນ.ຄສລ

ນະຄອນຫຼວງວຽງຈັນ, ວັນທີ: 06 Jul 2015

# ບົດແນະນຳ

ເຖິງ : ທ່ານ ຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ.

ເລື່ອງ : ການຕິດລາຄາສິນຄ້າ ແລະ ຄ່າບໍລິການ ເປັນເງິນກີບ.

- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ, ສະບັບເລກທີ 522/ນຍ, ລົງວັນທີ 23/12/2011 ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງ ກະຊວງອຸດສາຫະກຳ ແລະ ການຄ້າ.

- ອີງຕາມ ດຳລັດ 474/ນຍ, ລົງວັນທີ 18/11/2010, ວ່າດ້ວຍການຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ.

- ອີງຕາມ ດຳລັດ 150/ນຍ, ລົງວັນທີ 18/05/2007 ວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ແລະ ສົ່ງເສີມການນຳໃຊ້ເງິນກີບ.

ເພື່ອເປັນການສ້າງຄວາມສະດວກໃຫ້ແກ່ຜູ້ຊົມໃຊ້ ໃນການຊື້ສິນຄ້າທີ່ວາງຂາຍຢູ່ຕາມທ້ອງຕະຫຼາດ ແລະ ຫ້າງຮ້ານທົ່ວໄປ, ທັງເປັນການປັບປຸງການບໍລິການດ້ານຕ່າງໆໃຫ້ດີຂຶ້ນເທື່ອລະກ້າວ ເພື່ອຮອງຮັບການເຊື່ອມໂຍງປະຊາຄົມເສດຖະກິດອາຊຽນ, ແນໃສ່ເຮັດໃຫ້ສັງຄົມມີຄວາມຍຸຕິທຳ, ໂປ່ງໃສ, ສະຫງົບ ແລະ ເປັນລະບຽບຮຽບຮ້ອຍ.

ຫົວໜ້າກົມ ການຄ້າພາຍໃນ ກະຊວງອຸດສາຫະກຳ ແລະ ການຄ້າ ອອກບົດແນະນຳ ດັ່ງນີ້ :

1. ໃຫ້ຜູ້ປະກອບການ ແລະ ຊາວຄ້າຂາຍທົ່ວໄປ ຕິດລາຄາສິນຄ້າ ແລະ ຄ່າບໍລິການ ທີ່ຕົນວາງຂາຍຢູ່ໃນທ້ອງຕະຫຼາດ ແລະ ຫ້າງຮ້ານທົ່ວໄປ ເປັນເງິນກີບ ເພື່ອໃຫ້ຜູ້ຊົມໃຊ້ມີຄວາມສະດວກໃນການຈັດຊື້ສິນຄ້າ, ທັງເປັນການຊ່ວຍໃຫ້ຜູ້ຂາຍມີຄວາມສະດວກໃນການຂາຍສິນຄ້າຫຼາຍຂື້ນ;
2. ການຕິດລາຄາສິນຄ້າຕາມບົດແນະນຳສະບັບນີ້ມີຢູ່ 02 ຮູບແບບຄື :
   - ຕິດປ້າຍລາຄາໃສ່ແຕ່ລະຊະນິດສິນຄ້າ ແລະ ການບໍລິການ ທີ່ວາງຂາຍດ້ວຍແຜ່ນເຈ້ຍກະດາດ, ແຜ່ນພາດສະຕິກ, ແຜ່ນໂຟມ ...

- ຊຸນລາຄາສິນຄ້າ ແລະ ການບໍລິການ ແຕ່ລະຊະນິດທີ່ຕົນຂາຍໃສ່ກະດານ ຕິດໄວ້ບ່ອນທີ່ຜູ້ຊົມໃຊ້ສາມາດເຫັນໄດ້ງ່າຍ.

3. ລາຍການສິນຄ້າທີ່ຕ້ອງໄດ້ຕິດລາຄາມີ :

- ລາຍການສິນຄ້າທີ່ລັດຄວບຄຸມລາຄາ ( ບັນຊີ ກ ມີ 14 ລາຍການ );
- ລາຍການສິນຄ້າທີ່ຕ້ອງໄດ້ຕິດຕາມການເໜັງຕີງຂອງລາຄາ ( ບັນຊີ ຂ ມີ 106 ລາຍການ ).

4. ຂັ້ນຕອນໃນການຈັດຕັ້ງປະຕິບັດ :

ໃຫ້ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ຊີ້ນຳຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ ແນະນຳໃຫ້ຜູ້ປະກອບການ ລວມທັງຊາວຄ້າຂາຍຢູ່ໃນຕະຫຼາດທີ່ຂຶ້ນກັບເມືອງຂອງຕົນ ຕິດລາຄາສິນຄ້າ ແລະ ຄ່າບໍລິການເປັນເງິນກີບ ໃສ່ສິນຄ້າທີ່ຕົນວາງຂາຍຢູ່ໃນຫ້ອງຕະຫຼາດ ແລະ ຫ້າງຮ້ານທົ່ວໄປ ເພື່ອໃຫ້ຜູ້ຊົມໃຊ້ ສາມາດເລືອກຊື້ສິນຄ້າດ້ວຍຄວາມສະດວກ;

5. ຊີ້ນຳຄະນະຈັດສັນຕະຫຼາດ ໃຫ້ເອົາໃຈໃສ່ໂຄສະນາ, ເຜີຍແຜ່ ບົດແນະນຳສະບັບນີ້ ດ້ວຍຮູບການຕ່າງໆ ໃນຂອບເຂດຕະຫຼາດທີ່ຕົນຮັບຜິດຊອບຢ່າງເປັນເຈົ້າການ;

6. ໃຫ້ສົມທົບກັບຂະແໜງການກ່ຽວຂ້ອງ ນຳໃຊ້ມາດຕະການຕໍ່ຜູ້ລະເມີດຝ່າຝືນບົດແນະນຳສະບັບນີ້ ຕາມທີ່ໄດ້ລະບຸໄວ້ໃນໝວດ 6 ມາດຕາ 26 ຂອງດຳລັດ 474/ນຍ ແລະ ບົນພື້ນຖານສອດຄ່ອງກັບລະບຽບກົດໝາຍ ຂອງ ສປປ ລາວ ວາງອອກຢ່າງເຂັ້ມງວດ;

7. ໃຫ້ທຸກພາກສ່ວນເປັນເຈົ້າການ ພ້ອມກັນຈັດຕັ້ງປະຕິບັດຕາມພາລະບົດບາດຂອງໃຜລາວ ໃຫ້ໄດ້ຮັບຜົນດີ ແລ້ວລາຍງານຜົນການຈັດຕັ້ງປະຕິບັດໃຫ້ ກົມການຄ້າພາຍໃນ ຫຼື ສາຍຕັ້ງຂອງຕົນຊາບເປັນໄລຍະ 06 ເດືອນ;

8. ບົດແນະນຳສະບັບນີ້ ມີຜົນບັງຄັບໃຊ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ຫົວໜ້າ ກົມການຄ້າພາຍໃນ

ກົມການຄ້າພາຍໃນ

ບຸນທຽມ ແກ້ວສີພາ

<u>ສຳເນົາສົ່ງ:</u>

1. ຄະນະນຳກະຊວງ 05 ທ່ານ "ເພື່ອຊາບ"
2. ບັນດາກົມ, ຫ້ອງການ, ສະຖາບັນ ອ້ອມຂ້າງກະຊວງ "ເພື່ອຊາບ ແລະ ຕິດຕາມ"
3. ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດ "ເພື່ອຊີ້ນຳການຈັດຕັ້ງປະຕິບັດ" ,
4. ທະນາຄານແຫ່ງ ສປປລາວ "ເພື່ອຊາບ ແລະ ຕິດຕາມ"

## ບັນຊີ "ກ"

## ລາຍການສິນຄ້າຄວບຄຸມລາຄາ

| ລ/ດ | ລາຍການສິນຄ້າ | ມາດຕະການຄວບຄຸມລາຄາ (ນິຕິກຳ/ລະບຽບການ) |
|---|---|---|
| **I.** | ປະເພດນ້ຳມັນເຊື້ອໄຟ | |
| 1 | ແອັດຊັງພິເສດ | ຂໍ້ຕົກລົງ (1785/ອຄ.ຄພນ-7/9/09) |
| 2 | ແອັດຊັງທຳມະດາ | ---"--- |
| 3 | ກາຊວນ | ຂໍ້ຕົກລົງ (1785/ອຄ.ຄພນ-7/9/09) |
| **II.** | ປະເພດເຂົ້າ | |
| 1 | ເຂົ້າເປືອກໜຽວ | ດຳລັດ 474/ນຍ-18/11/2010 |
| 2 | ເຂົ້າເປືອກຈ້າວ | ---"--- |
| 3 | ເຂົ້າສານໜຽວ (ປະເພດ 1) | ---"--- |
| 4 | ເຂົ້າສານໜຽວ (ປະເພດ 2) | ---"--- |
| 5 | ເຂົ້າສານຈ້າວ (ປະເພດ 1) | ---"--- |
| 6 | ເຂົ້າສານຈ້າວ (ປະເພດ 2) | ດຳລັດ 474/ນຍ-18/11/2010 |
| **III.** | ປະເພດຊີ້ນ | |
| 1 | ຊີ້ນໝູ (ປະເພດ 1) | ຄຳສັ່ງແນະນຳ(0312/ອຄ.ຄພນ-13/2/12) |
| 2 | ຊີ້ນໝູ (ປະເພດ 2) | ---"--- |
| 3 | ຊີ້ນງົວ (ປະເພດ 1) | ---"--- |
| 4 | ຊີ້ນງົວ (ປະເພດ 2) | ---"--- |
| **IV.** | ປະເພດປາ | ---"--- |
| 1 | ປານິນ | ຄຳສັ່ງແນະນຳ(0312/ອຄ.ຄພນ-13/2/12) |
| | **ລວມ** | **4 ປະເພດ, 14 ລາຍການ** |

# ບັນຊີ "ຂ"

## ລາຍການສິນຄ້າທີ່ຕ້ອງຕິດຕາມການເໜັງຕີງຂອງລາຄາ

| ລ/ດ | ລາຍການສິນຄ້າ | ມາດຕະການຕິດຕາມລາຄາ (ນິຕິກຳ/ລະບຽບການ) |
|---|---|---|
| I | ໝວດສະບຽງອາຫານ | ດຳລັດ 474/ນຍ-18/11/2010 |
| 1 | ເຂົ້າເປືອກໜຽວ | ---"--- |
| 2 | ເຂົ້າເປືອກຈ້າວ | ---"--- |
| 3 | ເຂົ້າສານໜຽວລາວ ທີ 1 | ---"--- |
| 4 | ເຂົ້າສານໜຽວລາວ ທີ 2 | ---"--- |
| 5 | ເຂົ້າສານຈ້າວລາວ ທີ 1 | ---"--- |
| 6 | ເຂົ້າສານຈ້າວລາວ ທີ 2 | ---"--- |
| 7 | ເຂົ້າຈ້າວມະລິລາວ | ---"--- |
| 8 | ເຂົ້າຈ້າວມະລິໄທ | ---"--- |
| 9 | ຊີ້ນງົວ (ປະເພດ1 ຊີ້ນກ້ອນສິດ) | ---"--- |
| 10 | ຊີ້ນງົວ (ປະເພດ2 ຊີ້ນລວມ) | ---"--- |
| 11 | ຊີ້ນຄວາຍ (ປະເພດ1 ຊີ້ນກ້ອນສິດ) | ---"--- |
| 12 | ຊີ້ນຄວາຍ (ປະເພດ2 ຊີ້ນລວມ) | ---"--- |
| 13 | ຊີ້ນໝູ (ປະເພດ1 ຊີ້ນກ້ອນສິດ) | ---"--- |
| 14 | ຊີ້ນໝູ (ປະເພດ 2 ຊີ້ນສາມຊັ້ນ) | ---"--- |
| 15 | ໄກ່ລາດຄົວແລ້ວ 1 ກິໂລ | ---"--- |
| 16 | ໄກ່ພັນຄົວແລ້ວ 1 ກິໂລ | ---"--- |
| 17 | ເປັດຄົວແລ້ວ 1 ກິໂລ | ---"--- |
| 18 | ໄຂ່ໄກ່ເບີ1 | ---"--- |
| 19 | ປາຄໍ່ | ---"--- |
| 20 | ປາດຸກພັນ | ---"--- |
| 21 | ປານິນ | ---"--- |
| 22 | ໝາກເຜັດແຫ້ງ | ---"--- |
| 23 | ໝາກເຜັດສົດ | ---"--- |
| 24 | ຫົວຜັກບົ່ວແຫ້ງ | ---"--- |
| 25 | ຫົວຜັກທຽມແຫ້ງ | ---"--- |
| 26 | ນ້ຳຕານຊາຍແດງ | ---"--- |
| 27 | ນ້ຳຕານຊາຍຂາວ | ---"--- |
| 28 | ນົມຂຸ້ນຫວານ ກາມະລິ | ດຳລັດ 474/ນຍ-18/11/2010 |

| | | |
|---|---|---|
| 29 | ນົມຂຸ້ນຫວານ ກາໝີ | ດຳລັດ 474/ນຍ-18/11/2010 |
| 30 | ນ້ຳປາລາວ | ---"--- |
| 31 | ນ້ຳປາໄທ ກາປາມຶກ | ---"--- |
| 32 | ນ້ຳສະອິ້ວລາວ | ---"--- |
| 33 | ນ້ຳສະອິ້ວໄທ ກາພູເຂົາທອງ | ---"--- |
| 34 | ແປ້ງນົວກາຈອງ 0.5 ກິໂລ/ຖົງ | ---"--- |
| 35 | ນ້ຳມັນພືດຈາກເນື້ອປາມ 1 ລິດ/ຕຸກ ຫຼື ກວດແກ້ວ | ---"--- |
| 36 | ນ້ຳມັນພືດຈາກຖົ່ວເຫຼືອງ (ກາກຸກ) 1 ລິດ/ຕຸກ ຫຼື ກວດແກ້ວ | ---"--- |
| 37 | ນ້ຳມັນພືດຈາກຣຳເຂົ້າ (ກາຊິມ) 1 ລິດ/ຕຸກ ຫຼື ກວດແກ້ວ | ---"--- |
| 38 | ເບຍລາວ ແກ້ວໃຫຍ່ | ---"--- |
| 39 | ນ້ຳມັນຫວານລາວ ແກ້ວນ້ອຍ | ---"--- |
| II | <u>ໝວດເຄື່ອງກໍ່ສ້າງ</u> | ---"--- |
| 40 | ຊີມັງລາວປະສົມ ກະທິງຟ້າ P425 | ---"--- |
| 41 | ຊີມັງລາວປອດແລນ ກະທິງແດງ P525 | ---"--- |
| 42 | ຊີມັງລາວປະສົມ ກະທິງຂຽວ P425 | ---"--- |
| 43 | ຊີມັງລາວປະສົມ ກະທິງແດງ P425 | ---"--- |
| 44 | ຊີມັງລາວ ກາສິງແດງ | ---"--- |
| 45 | ຊີມັງລາວ ກາສິງຂຽວ | ---"--- |
| 46 | ຊີມັງໄທປະສົມ ກາເສືອ | ---"--- |
| 47 | ຊີມັງໄທປະສົມ ການົກ | ---"--- |
| 48 | ຊີມັງໄທປະສົມ TPI ຂຽວ | ---"--- |
| 49 | ຊີມັງໄທປອດແລນ ກາຊ້າງ | ---"--- |
| 50 | ຊີມັງໄທປອດແລນ ກາເພັດ | ---"--- |
| 51 | ຊີມັງໄທປອດແລນ TPI ແດງ | ---"--- |
| 52 | ຊີມັງໄທປອດແລນ P 525 | ---"--- |
| 53 | ຊີມັງຫວຽດນາມປອດແລນ | ---"--- |
| ກ. | ເຫຼັກເສັ້ນລາວ | ---"--- |
| 54 | ເຫຼັກເສັ້ນປ່ອງອ້ອຍລາວ ຟີ 10 ຍາວ 10ມ/ສ, 162 ສ/ຕ | ---"--- |
| 55 | ເຫຼັກເສັ້ນປ່ອງອ້ອຍລາວ ຟີ 12 ຍາວ 10ມ/ສ, 112 ສ/ຕ | ---"--- |
| 56 | ເຫຼັກເສັ້ນປ່ອງອ້ອຍລາວ ຟີ 14 ຍາວ 10ມ/ສ, 82 ສ/ຕ | ---"--- |
| ຂ. | ເຫຼັກເສັ້ນໄທ | ---"--- |
| 57 | ເຫຼັກເສັ້ນປ່ອງອ້ອຍໄທ ຟີ 6 ຍາວ 10ມ/ສ, 450 ສ/ຕ | ---"--- |
| 58 | ເຫຼັກເສັ້ນປ່ອງອ້ອຍໄທ ຟີ 8 ຍາວ 10ມ/ສ, 253 ສ/ຕ | ດຳລັດ 474/ນຍ-18/11/2010 |

| | | |
|---|---|---|
| 59 | ເຫຼັກເສັ້ນປ່ອງອ້ອຍໄທ ພີ 10 ຍາວ 10ມ/ສ, 162 ສ/ຕ | ດຳລັດ 474/ນຍ-18/11/2010 |
| 60 | ເຫຼັກເສັ້ນປ່ອງອ້ອຍໄທ ພີ 12 ຍາວ 10ມ/ສ, 112 ສ/ຕ | ---"--- |
| 61 | ເຫຼັກເສັ້ນປ່ອງອ້ອຍໄທ ພີ 14 ຍາວ 10ມ/ສ, 82 ສ/ຕ | ---"--- |
| ຄ. | ເຫຼັກເສັ້ນຫວຽດນາມ | ---"--- |
| 62 | ເຫຼັກເສັ້ນກົມກ້ຽງຫວຽດນາມ ພີ 6 ຍາວ 10ມ/ສ, 450 ສ/ຕ | ---"--- |
| 63 | ເຫຼັກເສັ້ນກົມກ້ຽງຫວຽດນາມ ພີ 8 ຍາວ 10ມ/ສ, 253 ສ/ຕ | ---"--- |
| 64 | ເຫຼັກເສັ້ນປ່ອງອ້ອຍຫວຽດນາມ ພີ 10 ຍາວ 10ມ/ສ, 162 ສ/ຕ | ---"--- |
| 65 | ເຫຼັກເສັ້ນປ່ອງອ້ອຍຫວຽດນາມ ພີ 12 ຍາວ 10ມ/ສ, 112 ສ/ຕ | ---"--- |
| 66 | ເຫຼັກເສັ້ນປ່ອງອ້ອຍຫວຽດນາມ ພີ 14 ຍາວ 10ມ/ສ, 82 ສ/ຕ | ---"--- |
| 67 | ກະເບື້ອງມຸງຫຼັງຄາສີຂາວຂອງລາວ (120X60X0.5) ຊມ | ---"--- |
| 68 | ກະເບື້ອງມຸງຫຼັງຄາສີຂອງລາວ (120X60X0.5) ຊມ | ---"--- |
| 69 | ກະເບື້ອງມຸງຫຼັງຄາສີຂອງໄທ (120X60X0.5) ຊມ | ---"--- |
| 70 | ກະເບື້ອງມຸງຫຼັງຄາສີຂາວຂອງໄທ (120X60X0.5) ຊມ | ---"--- |
| 71 | ສັງກະສີລາວ ເຄືອບຂາວ | ---"--- |
| 72 | ສັງກະສີໄທ ເຄືອບຂາວ | ---"--- |
| 73 | ນ້ຳສີພາຍໃນ U90 ຂອງລາວ 18 ລິດ/ຖັງ | ---"--- |
| 74 | ນ້ຳສີພາຍນອກ U90 ຂອງລາວ 18 ລິດ/ຖັງ | ---"--- |
| 75 | ນ້ຳສີພາຍໃນ ATM ຂອງລາວ 18 ລິດ/ຖັງ | ---"--- |
| 76 | ນ້ຳສີພາຍນອກ ATM ຂອງລາວ 18 ລິດ/ຖັງ | ---"--- |
| 77 | ນ້ຳສີພາຍໃນ TOA ຂອງໄທ 18 ລິດ/ຖັງ | ---"--- |
| 78 | ນ້ຳສີພາຍນອກ TOA ຂອງໄທ 18 ລິດ/ຖັງ | ---"--- |
| III | <u>ໝວດເຄື່ອງໃຊ້ການສຶກສາ</u> | ---"--- |
| 79 | ປື້ມຂຽນ ຂະໜາດ 100 ໜ້າ | ---"--- |
| 80 | ບິກຂຽນ ກາມ້າ | ---"--- |
| IV | <u>ໝວດຝຸ່ນວິທະຍາສາດ</u> | ---"--- |
| 81 | ປຸຍສູດ 16-20-00 ຖົງ 50 ກິໂລ | ---"--- |
| 82 | ປຸຍສູດ 46-00-00 ຖົງ 50 ກິໂລ | ---"--- |
| 83 | ປຸຍສູດ 15-15-15 ຖົງ 50 ກິໂລ | ---"--- |
| V | <u>ໝວດທີ່ວອາຫານສັດລ້ຽງ</u> | ---"--- |
| ກ. | ທີ່ວອາຫານສັດ (ລາວ) | ---"--- |
| 84 | 105 M ໄກ່ພັນໄຂ່ 18 ອາທິດຂຶ້ນໄປ. 50 ກິໂລ/ຖົງ ຫຼືເປົາ | ດຳລັດ 474/ນຍ-18/11/2010 |

| | | |
|---|---|---|
| 85 | 201 C ໄກ່ພັນເນື້ອ (ນ້ອຍ 1-21 ມື້) 50 ກິໂລ/ຖົງ ຫຼືເປົາ | ດຳລັດ 474/ນຍ-18/11/2010 |
| 86 | 202 P ໄກ່ພັນເນື້ອ (ໃຫຍ່ 21 ມື້) 30 ກິໂລ/ຖົງ ຫຼືເປົາ | ---"--- |
| 87 | 302-M/P ອາຫານໝູນ້ອຍເກີດໃໝ່ 15-30ກິໂລ. 50 ກິໂລ/ຖົງ ຫຼືເປົາ | ---"--- |
| 88 | 305 M/P ອາຫານໝູຊິ້ນໃຫຍ່ຂາຍ. 50 ກິໂລ/ຖົງ ຫຼືເປົາ | ---"--- |
| 89 | 805 M ເຂັ້ມຂຸ້ນໝູລວມ. 50 ກິໂລ/ຖົງ ຫຼືເປົາ | ---"--- |
| ຂ. | ຫົວອາຫານສັດ (ໄທ) | ---"--- |
| 90 | 440 ໄກ່ນ້ອຍໄທ, 30 ກິໂລ/ຖົງ | ---"--- |
| 91 | 441 ໄກ່ໃຫຍ່ໄທ, 30 ກິໂລ/ຖົງ | ---"--- |
| 92 | 240 ໝູນ້ອຍໄທ, 30 ກິໂລ/ຖົງ | ---"--- |
| 93 | 241 ໝູລຸ້ນໄທ, 30 ກິໂລ/ຖົງ | ---"--- |
| 94 | 242 ໝູກາງໄທ, 30 ກິໂລ/ຖົງ | ---"--- |
| 95 | 243 ໝູໃຫຍ່ໄທ, 30 ກິໂລ/ຖົງ | ---"--- |
| 96 | CP 9931 ປານ້ອຍໄທ, 25 ກິໂລ/ຖົງ | ---"--- |
| 97 | CP 9932 ປາໃຫຍ່ໄທ, 25 ກິໂລ/ຖົງ | ---"--- |
| 98 | 700 ປານ້ອຍໄທ SP Feet, 25 ກິໂລ/ຖົງ | ---"--- |
| 99 | 702 ປາໃຫຍ່ໄທ, 25 ກິໂລ/ຖົງ | ---"--- |
| **VI** | **ໝວດເຄື່ອງໃຊ້ຄົວເຮືອນ** | ---"--- |
| 100 | ສະບູຝຸ່ນ Viso 400g | ---"--- |
| **VII** | **ໝວດນ້ຳມັນເຊື້ອໄຟ ແລະ ອາຍແກັດສ** | ---"--- |
| 101 | ແກັດສຫຸງຕົ້ມ 15 ກິໂລ/ຖັງ | ---"--- |
| 102 | ນ້ຳມັນແອັດຊັງພິເສດ | ---"--- |
| 103 | ນ້ຳມັນແອັດຊັງທຳມະດາ | ---"--- |
| 104 | ນ້ຳມັນກາຊວນ | ---"--- |
| **VIII** | **ໝວດເງິນ-ຄຳຮູບປະພັນ** | ---"--- |
| 105 | ຄຳ ຊື້ເຂົ້າ | ---"--- |
| | ຄຳ ຂາຍອອກ | ---"--- |
| 106 | ເງິນ ຊື້ເຂົ້າ | ---"--- |
| | ເງິນ ຂາຍອອກ | ດຳລັດ 474/ນຍ-18/11/2010 |
| | ລວມ | 8 ໝວດ, 106 ລາຍການ |